ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ
ຂອງພະຍາດອັກເສບປອດສາຍພັນໃໝ່ (COVID-19)

ເລກທີ 2336 /ສພກ

ນະຄອນຫຼວງວຽງຈັນ, ວັນທີ 31 ກໍລະກົດ 2020

# ຄຳແນະນຳ

## ສຳລັບຜູ້ທີ່ຈະເດີນທາງ ເຂົ້າ-ອອກ ສປປ ລາວ ໃນໄລຍະດຳເນີນມາດຕະການປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19

- ອີງຕາມ ຂໍ້ຕົກລົງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 09/ນຍ, ລົງວັນທີ 03 ກຸມພາ 2020 ວ່າດ້ວຍການ ແຕ່ງຕັ້ງ ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດ ຂອງພະຍາດອັກເສບປອດຈາກເຊື້ອ ຈຸລະໄວກສາຍ ພັນໃໝ່ (COVID-19);
- ອີງຕາມ ສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໄວກສາຍພັນໃໝ່ (COVID-19) ທີ່ກຳລັງລະບາດ ໃນບັນດາປະເທດພາກພື້ນ ແລະ ແຜ່ຂະຫຍາຍຫຼາຍປະເທດໃນໂລກ;
- ອີງຕາມ ແຈ້ງການວ່າດ້ວຍການສືບຕໍ່ປະຕິບັດບັນດາມາດຕະການຜ່ອນຜັນ, ປ້ອງກັນ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ໃນໄລຍະແຕ່ວັນທີ 01-31 ສິງຫາ 2020, ສະບັບເລກທີ 806/ຫສນຍ, ລົງວັນທີ 29 ກໍລະກົດ 2020;
- ອີງຕາມ ບົດບັນທຶກກອງປະຊຸມຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຄັ້ງວັນທີ 24 ກໍລະກົດ 2020.

ເພື່ອສືບຕໍ່ປະຕິບັດມາດຕະການປ້ອງກັນການຕິດເຊື້ອ ແລະ ການແຜ່ເຊື້ອຂອງພະຍາດ COVID-19 ຢູ່ ສປປ ລາວ, ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ຂໍຖືເປັນກຽດແຈ້ງມາຍັງບັນດາທ່ານທີ່ ມີຈຸດປະສົງຈະເດີນທາງເຂົ້າ ສປປ ລາວ ໃນໄລຍະນີ້ ຈະຕ້ອງໄດ້ປະຕິບັດຕາມຂັ້ນຕອນ ແລະ ມາດຕະການ ດັ່ງລຸ່ມນີ້:

I. <u>ສຳລັບຄົນຕ່າງປະເທດ:</u>

1. ບຸກຄົນທີ່ມີຄວາມຈຳເປັນຮີບດ່ວນເດີນທາງເຂົ້າມາ ສປປລາວ ເພື່ອປະຕິບັດວຽກງານ ທຸກກໍລະນີ ແມ່ນຕ້ອງໄດ້ຮັບອະນຸຍາດຈາກຄະນະສະເພາະກິດກ່ອນ ແລະ ຕ້ອງປະຕິບັດຕາມມາດຕະການດັ່ງນີ້:
   - ຕ້ອງມີໃບຢັ້ງຢືນການກວດຊອກຫາເຊື້ອພະຍາດ COVID-19 ດ້ວຍເຄື່ອງກວດ RT-PCR ພາຍໃນ 72 ຊົ່ວໂມງກ່ອນການເດີນທາງເຂົ້າມາ ສປປ ລາວ;
   - ເມື່ອເຖິງ ສປປ ລາວ ຕ້ອງໄດ້ກວດຊອກຫາເຊື້ອພະຍາດ COVID-19 ດ້ວຍເຄື່ອງກວດ RT-PCR ແລະ ຕ້ອງໄດ້ຈຳກັດບໍລິເວນ ຢູ່ສະຖານທີ່ ທີ່ທາງຄະນະສະເພາະກິດໄດ້ກຳນົດໄວ້ເທົ່ານັ້ນ ໃຫ້ຄົບກຳນົດ



老挝资讯情报

14 ວັນ ໂດຍບໍ່ອະນຸຍາດໃຫ້ໄປຈຳກັດບໍລິເວນຢູ່ເຂດອື່ນ ແລະ ຈະຕ້ອງໄດ້ປະຕິບັດມາດຕະການປ້ອງກັນ ແລະ ຄວບຄຸມການຕິດເຊື້ອຢ່າງເຂັ້ມງວດ.

2. ສຳລັບຜູ້ທີ່ມີຄວາມຈຳເປັນເຂົ້າມາເຮັດວຽກໄລຍະສັ້ນໃນ ສປປ ລາວ ບໍ່ເກີນ 14 ວັນ, ຄະນະສະເພາະກິດຈະພິຈາລະນາສະເພາະຜູ້ທີ່ເດີນທາງມາຈາກບັນດາປະເທດທີ່ບໍ່ມີກໍລະນີການຕິດເຊື້ອ ຫຼື ຕິດເຊື້ອກະແຈກກະຈາຍ (ຕາມການແບ່ງຂັ້ນຂອງອົງການອະນາໄມໂລກ) ທີ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດ ເຂົ້າມາ ສປປ ລາວ ຈະຕ້ອງປະຕິບັດຕາມມາດຕະການດັ່ງນີ້:

- ຕ້ອງມີຈົດໝາຍເຊີນ ແລະ ໜັງສືຮັບປະກັນຈາກອົງການຈັດຕັ້ງລັດ ຫຼື ເອກະຊົນທີ່ກ່ຽວຂ້ອງ ພ້ອມທັງແຜນການເຄື່ອນໄຫວລະອຽດ ຕະຫຼອດໄລຍະເຄື່ອນໄຫວເຮັດວຽກຢູ່ ສປປລາວ.
- ຕ້ອງມີໃບຢັ້ງຢືນການກວດຊອກຫາເຊື້ອພະຍາດ COVID-19 ດ້ວຍເຄື່ອງກວດ RT-PCR ພາຍໃນ 72 ຊົ່ວໂມງ ກ່ອນການເດີນທາງເຂົ້າ ສປປ ລາວ;
- ເມື່ອເດີນທາງມາຮອດ ສປປ ລາວ ຕ້ອງໄດ້ກວດຊອກຫາເຊື້ອພະຍາດ COVID-19 ດ້ວຍເຄື່ອງກວດ RT-PCR ແລະ ຈຳກັດບໍລິເວນຢູ່ສະຖານທີ່ທີ່ທາງຄະນະສະເພາະກິດໄດ້ກຳນົດໄວ້ ເພື່ອລໍຖ້າຈົນກວ່າຈະໄດ້ຮັບຜົນກວດ;
- ຖ້າຜົນກວດບໍ່ພົບເຊື້ອ (-) ແມ່ນສາມາດດຳເນີນກິດຈະກຳຕາມແຜນການທີ່ໄດ້ອະນຸມັດໃນຂອບເຂດໂຮງແຮມ, ສະຖານທີ່ສະເພາະຂອງບໍລິສັດ ຫຼື ສະຖານທີ່ທີ່ທາງຄະນະສະເພາະກິດໄດ້ກຳນົດ ຫຼື ຮັບຮອງໄວ້ ບໍ່ອະນຸຍາດໃຫ້ໄປເຄື່ອນໄຫວນອກສະຖານທີ່ ພ້ອມທັງຕ້ອງປະຕິບັດມາດຕະການປ້ອງກັນ ແລະ ຄວບຄຸມການຕິດເຊື້ອຢ່າງເຂັ້ມງວດ;
- ການຈັດຕັ້ງທີ່ຮັບຜິດຊອບໃນການຕິດຕາມການເຄື່ອນໄຫວຂອງແຂກ ແລະ ຕ້ອງລາຍລະອຽດກ່ຽວກັບບັນດາບຸກຄົນ ຫຼື ກຸ່ມຄົນທີ່ເຂົ້າມາພົວພັນວຽກ ໃຫ້ຄະນະສະເພາະກິດຂັ້ນສູນກາງ ຫຼື ຂັ້ນທ້ອງຖິ່ນຮັບຊາບ;
- ພາຍຫຼັງສຳເລັດພາລະກິດ ແມ່ນໃຫ້ກັບຄືນປະເທດຕາມກຳນົດເວລາ ໂດຍແຈ້ງໃຫ້ ຄະນະສະເພາະກິດຮັບຊາບ.

3. ສຳລັບນັກການທູດ, ພະນັກງານອົງການຈັດຕັ້ງສາກົນ ທີ່ເປັນເຄືອຂ່າຍຂອງອົງການສະຫະປະຊາຊາດ, ອົງການຈັດຕັ້ງສາກົນທີ່ລັດຖະບານລາວໄດ້ມີສັນຍາໃຫ້ອະພິສິດ ແລະ ສິດຄຸ້ມກັນທາງການທູດ ແລະ ສະມາຊິກຄອບຄົວທີ່ຕິດຕາມ ທີ່ໄດ້ຮັບອະນຸຍາດຈາກຄະນະສະເພາະກິດ ເຂົ້າມາ ສປປ ລາວ ຈະຕ້ອງປະຕິບັດຕາມມາດຕະການດັ່ງນີ້:

- ຕ້ອງມີໃບຢັ້ງຢືນການກວດຊອກຫາເຊື້ອພະຍາດ COVID-19 ດ້ວຍເຄື່ອງກວດ RT-PCR ພາຍໃນ 72 ຊົ່ວໂມງກ່ອນການເດີນທາງເຂົ້າມາ ສປປ ລາວ;
- ເມື່ອເດີນທາງມາຮອດ ສປປລາວ ຕ້ອງໄດ້ກວດຊອກຫາເຊື້ອພະຍາດ COVID-19 ດ້ວຍເຄື່ອງກວດ RT-PCR ກ່ອນຈະໄດ້ຮັບອະນຸຍາດໃຫ້ເດີນທາງໄປສະຖານທີ່ພັກເຊົາ;
- ເມື່ອຜົນກວດບໍ່ພົບເຊື້ອແມ່ນໃຫ້ສືບຕໍ່ ຈຳກັດບໍລິເວນຢູ່ສະຖານທີ່ພັກເຊົາຂອງຕົນເອງ ຫຼື ສະຖານທີ່ທາງສະຖານທູດຮອງຮັບ ຈົນຄົບກຳນົດ 14 ວັນ ແລະ ຕ້ອງປະຕິບັດມາດຕະການປ້ອງກັນ ແລະ ຄວບຄຸມການຕິດເຊື້ອຢ່າງເຂັ້ມງວດ ພ້ອມທັງລາຍງານປະຈຳວັນກ່ຽວກັບການຕິດຕາມອຸນຫະພູມ, ອາການຜິດປົກກະຕິທາງລະບົບຫາຍໃຈ ໃຫ້ຄະນະສະເພາະກິດ ໂດຍຜ່ານກົມພິທີການທູດ ກະຊວງການຕ່າງປະເທດ.



老挝资讯情报

4. ສຳລັບພົນລະເມືອງຕ່າງປະເທດ ທີ່ມີຈຸດປະສົງເດີນທາງອອກຈາກ ສປປ ລາວ ຕ້ອງໄດ້ສະເໜີຜ່ານສະຖານເອກອັກຄະລັດຖະທູດຂອງປະເທດຕົນ ແລະ ຕ້ອງໄດ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ ຂອງປະເທດປາຍທາງ;ສະຖານເອກອັກຄະລັດຖະທູດທີ່ກ່ຽວຂ້ອງ ຕ້ອງເຮັດໜັງສືສະເໜີມາຍັງ ກະຊວງການຕ່າງປະເທດ ພ້ອມແຈ້ງລາຍຊື່, ເລກທີໜັງສືຜ່ານແດນ, ວັນເວລາ, ດ່ານທີ່ຈະເດີນທາງອອກ, ພາຫະນະໃນການເດີນທາງ ເພື່ອພິຈາລະນາອຳນວຍຄວາມສະດວກ.

II. <u>ສຳລັບພົນລະເມືອງລາວ:</u>

1. ສຳລັບພົນລະເມືອງລາວ ທີ່ມີຈຸດປະສົງຢາກເດີນທາງກັບ ສປປ ລາວ ໃຫ້ລົງທະບຽນຢູ່ສະຖານເອກອັກຄະລັດຖະທູດ ຫຼື ສະຖານກົງສຸນໃຫຍ່ ແຫ່ງ ສປປ ລາວ ຢູ່ປະເທດທີ່ຕົນອາໃສຢູ່ ໂດຍແຈ້ງຂໍ້ມູນລະອຽດຂອງບຸກຄົນ, ຊື່ ແລະ ເບີໂທລະສັບຜູ້ຕິດຕໍ່ປະສານງານຢູ່ ສປປ ລາວ, ສາເຫດການຕົກຄ້າງ, ຄາດຄະເນວັນເວລາເດີນທາງ, ພາຫະນະໃນການເດີນທາງ, ດ່ານທີ່ຈະເຂົ້າ; ສະຖານທີ່ຈະເຂົ້າຈຳກັດບໍລິເວນ (ໂຮງແຮມ ຫຼື ສູນຈຳກັດບໍລິເວນ ຕາມການກຳນົດຂອງຄະນະສະເພາະກິດສູນກາງ ແລະ ທ້ອງຖິ່ນ) ເພື່ອໃຫ້ຄະນະສະເພາະກິດຄົ້ນຄວ້າພິຈາລະນາ ຫາຊ່ອງທາງອຳນວຍຄວາມສະດວກໃນການເດີນທາງກັບ ສປປ ລາວ;

2. ສຳລັບຜູ້ທີ່ເດີນທາງມາຈາກປະເທດທີ່ມີຊາຍແດນຕິດຈອດກັບ ສປປ ລາວ ຫຼື ຜູ້ທີ່ເດີນທາງມາຈາກບັນດາປະເທດ ທີ່ບໍ່ມີກໍລະນີການຕິດເຊື້ອ ຫຼື ຕິດເຊື້ອກະແຈກກະຈາຍ (ຕາມການແບ່ງຂັ້ນຂອງອົງການອະນາໄມໂລກ ແລະ ບຸກຄົນເຫຼົ່ານີ້ຈະຕ້ອງອາໃສຢູ່ໃນປະເທດນັ້ນຢ່າງໜ້ອຍໜຶ່ງເດືອນຂຶ້ນໄປ ໂດຍບໍ່ໄດ້ເດີນທາງຜ່ານປະເທດ ຫຼື ເຂດທີ່ກຳລັງມີການລະບາດ) ຈະຕ້ອງປະຕິບັດຕາມມາດຕະການດັ່ງນີ້:

   - ຍົກເວັ້ນການກວດ ຊອກຫາເຊື້ອພະຍາດ COVID-19 ກ່ອນເຂົ້າມາ ສປປ ລາວ ນອກຈາກກໍລະນີ ທີ່ມີການຮຽກຮ້ອງໃຫ້ມີໃບຢັ້ງຢືນກວດ COVID-19 ຕາມເງື່ອນໄຂຂອງສາຍການບິນ ແລະ ປະເທດທາງຜ່ານ;
   - ເມື່ອເດີນທາງມາຮອດ ສປປ ລາວ ຕ້ອງໄດ້ກວດຊອກຫາເຊື້ອພະຍາດ COVID-19 ດ້ວຍເຄື່ອງກວດ RT-PCR ແລະ ຈຳກັດບໍລິເວນ ຢູ່ສະຖານທີ່ ທາງຄະນະສະເພາະກິດໄດ້ກຳນົດໄວ້ ລໍຖ້າຈົນກວ່າຈະໄດ້ຮັບຜົນກວດ;
   - ຖ້າຜົນກວດບໍ່ພົບເຊື້ອ(-) ແມ່ນ ສືບຕໍ່ຈຳກັດບໍລິເວນໃນສະຖານທີ່ ທາງຄະນະສະເພາະກິດໄດ້ກຳນົດໄວ້ ຫຼື ໄປຈຳກັດບໍລິເວນຢູ່ສະຖານທີ່ພັກເຊົາຂອງຕົນເອງທີ່ໄດ້ຮັບການກວດກາ ແລະ ຢັ້ງຢືນຈາກຄະນະສະເພາະກິດ ຈົນຄົບກຳນົດ 14 ວັນ ແລະ ປະຕິບັດມາດຕະການປ້ອງກັນ ແລະ ຄວບຄຸມການຕິດເຊື້ອຢ່າງເຂັ້ມງວດ ພ້ອມທັງ ລາຍງານປະຈຳວັນກ່ຽວກັບການຕິດຕາມອຸນຫະພູມ, ອາການຜິດປົກກະຕິທາງລະບົບຫາຍໃຈ ໃຫ້ຄະນະສະເພາະກິດຊາບ;

3. ຜູ້ທີ່ເດີນທາງມາຈາກ ບັນດາປະເທດທີ່ມີການລະບາດເປັນຈຸ້ມ ຫຼື ລະບາດໃນຊຸມຊົນ (ຕາມການແບ່ງຂັ້ນຂອງອົງການອະນາໄມໂລກ) ຈະຕ້ອງປະຕິບັດຕາມມາດຕະການດັ່ງນີ້:

   - ຍົກເວັ້ນການກວດຊອກຫາເຊື້ອພະຍາດ COVID-19 ກ່ອນເຂົ້າ ສປປ ລາວ ນອກຈາກກໍລະນີ ທີ່ມີການຮຽກຮ້ອງໃຫ້ມີໃບຢັ້ງຢືນກວດ COVID-19 ຕາມເງື່ອນໄຂຂອງສາຍການບິນ ແລະ ປະເທດທາງຜ່ານ;
   - ເມື່ອເດີນທາງມາຮອດ ສປປ ລາວ ຕ້ອງໄດ້ກວດຊອກຫາເຊື້ອພະຍາດ COVID-19 ດ້ວຍເຄື່ອງກວດ RT-PCR, ຕ້ອງໄດ້ຈຳກັດບໍລິເວນ ຢູ່ສະຖານທີ່ຈຳກັດບໍລິເວນ ທີ່ທາງຄະນະສະເພາະກິດໄດ້ກຳນົດໄວ້ເທົ່ານັ້ນ ຈົນຄົບກຳນົດ 14 ວັນ ໂດຍບໍ່ອະນຸຍາດໃຫ້ໄປຈຳກັດບໍລິເວນຢູ່ເຂດອື່ນ ແລະ ຈະຕ້ອງໄດ້ປະຕິບັດມາດຕະການປ້ອງກັນ ແລະ ຄວບຄຸມການຕິດເຊື້ອຢ່າງເຂັ້ມງວດ.

老挝资讯情报

4. ສຳລັບພົນລະເມືອງລາວ ທີ່ມີຄວາມຈຳເປັນຮີບດ່ວນເດີນທາງໄປຕ່າງປະເທດ, ເປັນຕົ້ນແມ່ນ ໄປວຽກທາງການ ຫຼື ທຸລະກິດທີ່ຈຳເປັນ, ໄປສຶກສາຕໍ່ ແລະ ປິ່ນປົວສຸຂະພາບ (ພະຍາດຮ້າຍແຮງທີ່ບໍ່ສາມາດປິ່ນປົວຢູ່ ລາວ) ຕ້ອງແຈ້ງພາກສ່ວນກ່ຽວຂ້ອງເພື່ອຂໍອະນຸຍາດ ແລະ ເພື່ອອຳນວຍຄວາມສະດວກໃນການເດີນທາງ ແຕ່ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການຂອງປະເທດປາຍທາງ; ເວລາກັບມາຕ້ອງໄດ້ກວດຫາເຊື້ອພະຍາດ COVID-19 ແລະ ຈຳກັດບໍລິເວນ ຕາມລະບຽບການ.

❖ <u>ໝາຍເຫດ:</u>

1) ການຈັດແບ່ງປະເພດການຕິດເຊື້ອຂອງແຕ່ລະປະເທດຕາມອົງການອະນາໄມໂລກຈັດຂຶ້ນແມ່ນຕິດຕາມ Website:https://www.who.int/emergencies/diseases/novel-coronavirus-2019/situation-reports ເຊິ່ງຈະມີການປ່ຽນແປງໄປຕາມສະພາບການລະບາດ;

2) ຄຳແນະນຳລະອຽດກ່ຽວກັບຂັ້ນຕອນລະອຽດການປະກອບເອກະສານຂໍອະນຸຍາດເຂົ້າອອກ ສປປລາວ ແມ່ນໃຫ້ເບິ່ງໃນເວັບໄຊ ຂອງກະຊວງການຕ່າງປະເທດ http://www.mofa.gov.la/

ແລະ ເວັບໄຊຂອງຄະນະສະເພາະກິດ https://www.covid19.gov.la/index.php.

3) ສຳລັບການເຂົ້າ-ອອກ ລະຫວ່າງ ສປປ ລາວ ກັບປະເທດທີ່ມີການຕົກລົງສະເພາະສອງຝ່າຍ ນຳກັນ, ຈະມີຄຳແນະນຳຕ່າງຫາກ.

4) ສຳລັບຄ່າໃຊ້ຈ່າຍໃນເວລາການຈຳກັດບໍລິເວນ, ຜູ້ກ່ຽວ ຫຼື ບໍລິສັດ, ອົງການທີ່ສະເໜີເອົາເຂົ້າມາຕ້ອງເປັນຜູ້ຮັບຜິດຊອບທັງໝົດ;

5) ສຳລັບຄົນຕ່າງປະເທດຖ້າກວດພົບການຕິດເຊື້ອ ພາຍຫຼັງເດີນທາງມາຮອດ ສປປ ລາວ, ບຸກຄົນດັ່ງກ່າວຕ້ອງຖືກນຳສົ່ງໄປແຍກປ່ຽວ ແລະ ປິ່ນປົວຢູ່ໂຮງໝໍທີ່ໄດ້ກຳນົດໄວ້, ຜູ້ກ່ຽວ ແລະ ການຈັດຕັ້ງທີ່ສະເໜີເອົາເຂົ້າມາ ຕ້ອງຮັບຜິດຊອບໃຊ້ຈ່າຍຄ່າບໍລິການປິ່ນປົວ ແລະ ລາຍຈ່າຍປິ່ນອ້ອມຕ່າງໆ ທີ່ເກີດຂຶ້ນທັງໝົດ;

6) ຖ້າຫາກບໍ່ປະຕິບັດການຈຳກັດບໍລິເວນຄົບ 14 ວັນ ຫຼື ມີການລະເມີດຄຳແນະນຳຕ່າງໆ ເຮັດໃຫ້ເກີດມີການແຜ່ເຊື້ອຕໍ່ບຸກຄົນອື່ນ, ຜູ້ກ່ຽວ ແລະ ການຈັດຕັ້ງທີ່ສະເໜີເຂົ້າມາຕ້ອງຮັບຜິດຊອບໃຊ້ຈ່າຍຄ່າບໍລິການປິ່ນປົວ ແລະ ລາຍຈ່າຍປິ່ນອ້ອມຕ່າງໆ ທີ່ເກີດຂຶ້ນທັງໝົດ.

7) ຄຳແນະນຳສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ວັນທີ 01 ສິງຫາ 2020 ເປັນຕົ້ນໄປ ຈົນກວ່າຈະມີຄຳແນະນຳສະບັບໃໝ່ປ່ຽນແທນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ເພື່ອຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ ຢ່າງເຂັ້ມງວດດ້ວຍ.

ຮອງລັດຖະມົນຕີ, ກະຊວງສາທາລະນະສຸກ
ຫົວໜ້າກອງເລຂາຄະນະສະເພາະກິດ
ຜູ້ປະຈຳການ




ຮອງສາດສະດາຈານ ດຣ.ພູທອງ ເມືອງປາກ



老挝资讯情报